# ໃຫ້ລະວັງ

## ການສໍ້ກົງປະກັນພັຍ

### ຢ່າຂາຍຫລືປ່ອຍໃຫ້ຜູ້ໃດຜູ້ນຶ່ງສວຍໃຊ້ປະກັນພັຍຂອງທ່ານ.

### ມັນເປັນການຜິດກົດໝາຍ

ຢ່າປ່ອຍໃຫ້ຜູ້ໃດຜູ້ນຶ່ງໃຊ້ຊື່, ລົດ ຫລື ຂໍ້ຄວາມກ່ຽວກັບສຸຂະພາບຂອງທ່ານໄປແຈ້ງເອົາຄ່າປະກັນພັຍໃນກໍລະນີໃດໆ.

ເມື່ອທ່ານອານຸຍາດໃຫ້ຜູ້ໃດຜູ້ນຶ່ງໃຊ້ປະກັນພັຍຂອງທ່ານ :

- ທ່ານອາດຈະກາຍເປັນຜູ້ເຄາະຮ້າຍໃນການປອມແປງຫລັກຖານ.
- ນາຍຈ້າງຂອງທ່ານອາດຈະກາຍເປັນຜູ້ເຄາະຮ້າຍໃນການກະທຳຜິດກົດໝາຍ.
- ທ່ານອາດຈະກາຍເປັນຈຳເລີຍທີ່ຖືກຟ້ອງໃນການສວຍໃຊ້ປະກັນພັຍໃນທາງທີ່ບໍ່ຖືກຕ້ອງ.

ຜູ້ຮ້າຍຕ້ອງການສວຍໃຊ້ປະກັນພັຍຂອງໝົດທຸກຄົນ. ແຕ່ລະປີບໍຣິສັດປະກັນພັຍຕ້ອງເສັຽເງິນເປັນຈຳນວນລ້ານໆໂດລາຍ້ອນການປອມແປງເອກະສານກ່ຽວກັບປະກັນພັຍ. ໃນເມື່ອມີການປອມແປງເອກະສານເຊັ່ນນີ້ ທ່ານແລະນາຍຈ້າງຂອງທ່ານຈະເປັນຜູ້ໄດ້ຮັບຄວາມເສັຽຫາຍຫລາຍທີ່ສຸດ.

ສະນັ້ນ ຢ່າປ່ອຍໃຫ້ຜູ້ໃດຜູ້ນຶ່ງບອກທ່ານວ່າບໍ່ເປັນຫຍັງດອກຖ້າເອົາຈະປອມແປງເອກະສານປະກັນພັຍ. *ມັນເປັນການຜິດກົດໝາຍ* ການຍິນຍອມໃຫ້ຜູ້ໃດຜູ້ນຶ່ງໃຊ້ປະກັນພັຍຂອງທ່ານເພື່ອປອມແປງເອກະສານນັ້ນເປັນການຜິດກົດໝາຍ.

ການລົງ ໂທດປັບໃໝໃນການປອມແປງເອກະສານປະກັນພັຍ ມີໂທດຕິດຄຸກເຖິງ 5ປີ ພ້ອມກັບຖືກປັບໃໝເປັນຈຳນວນເງີນ $7,500.00

*ຖ້າທ່ານມີຈຸດປະສົງຢາກແຈ້ງຄວາມ* ກ່ຽວກັບຜູ້ໃດຜູ້ນຶ່ງທີ່ພຍາຍາມສອບຖາມເອົາ ຂໍ້ຄວາມກ່ຽວກັບປະກັນພັຍຂອງທ່ານ ໃຫ້ໂທໄປຫ້ອງການປ້ອງກັນແລະປາບປາມການສໍ້ກົງປະກັນພັຍຂອງລັດໄອໂອວາ

ເລກໂທ : 1-877-955-1212